# ຮ່າງຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງວິຊາຊີບຂອງ ທະນາຍຄວາມຕ່າງປະເທດ ຢູ່ ສປປລາວ

ຮ່າງ1-ກັນຍາ 2025

ຮ່າງສະເໜີເພື່ອທາບທາມປະກອບຄຳເຫັນຢ່າງກວ້າງຂວາງ

## ສາລະບານ

ໝວດທີ 1 ບົດບັດຍັດທົ່ວໄປ ..... 3
ມາດຕາ 1 ຈຸດປະສົງ ..... 3
ມາດຕາ 2 ການຄຸ້ມຄອງ ທະນາຍຄວາມຕ່າງປະເທດ ..... 3
ມາດຕາ 3 ຫຼັກການ ໃນການຄຸ້ມຄອງ ທະນາຍຄວາມຕ່າງປະເທດ ..... 4
ມາດຕາ 4 ຂອບເຂດການນຳໃຊ້ ..... 4
ໝວດທີ 2 ການຂໍອະນຸຍາດ ການເຄື່ອນໄຫວວິຊາຊີບກົດໝາຍ ..... 4
ມາດຕາ 5 ເງື່ອນໄຂໃນການຂໍອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ..... 4
ມາດຕາ 6 ເນື້ອໃນຂອງຄຳຮ້ອງ ແລະ ເອກະສານປະກອບ ..... 5
ມາດຕາ 7 ຂັ້ນຕອນການພິຈາລະນາຄຳຮ້ອງຂໍອະນຸຍາດເຄື່ອນການໄຫວວິຊາຊີບກົດໝາຍ ..... 5
ມາດຕາ 8 ເນື້ອໃນໃບອະນຸຍາດ ການເຄື່ອນໄຫວວິຊາຊີບກົດໝາຍ ..... 6
ມາດຕາ 9 ອາຍຸຂອງການອະນຸຍາດ, ການເກັບຮັກສາ ແລະ ການເຜີຍແຜ່ຂໍ້ມູນ ..... 6
ໝວດທີ 3 ການການໂຈະ ແລະ ການຖອນ ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ..... 7
ມາດຕາ 10 ການສະເໜີ ໂຈະ ການເຄື່ອນໄຫວວິຊາຊີບກົດໝາຍ ..... 7
ມາດຕາ 11 ການພິຈາລະນາໂຈະ ການເຄື່ອນໄຫວວິຊາຊີບກົດໝາຍ ..... 7
ມາດຕາ 12 ການຖອນການອະນຸຍາດ ແລະ ລຶບຊື່ທະນາຍຄວາມຕ່າງປະເທດ ..... 8
ໝວດທີ 4 ການຕໍ່ການອະນຸຍາດ ..... 8
ມາດຕາ 13 ການສະເໜີຕໍ່ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ..... 8
ມາດຕາ 14 ຄຳຮ້ອງ ແລະ ເອກະສານປະກອບ ໃນການຂໍຕໍ່ການອະນຸຍາດ ..... 8
ມາດຕາ 15 ເງື່ອນໄຂໃນການພິຈາລະນາຕໍ່ການອະນຸຍາດ ..... 8
ມາດຕາ 16 ຂັ້ນຕອນການພິຈາລະນາຕໍ່ການອະນຸຍາດ ..... 9
ໝວດທີ 5 ສິດ ແລະ ພັນທະ ແລະ ການລາຍງານ ..... 9
ມາດຕາ 17 ສິດ ແລະ ພັນທະທະນາຍຄວາມຕ່າງປະເທດ ..... 9
ມາດຕາ 18 ສິດ ແລະ ພັນທະຂອງວິສາຫະກິດກົດໝາຍ ..... 9
ມາດຕາ 19 ການລາຍງານ ..... 10
ໝວດທີ 6 ການປະສານງານ ..... 10
ມາດຕາ 20 ການປະສານງານກັບສະພາທະນາຍຄວາມ ..... 10
ມາດຕາ 21 ການປະສານງານກັບຂະແໜງຍຸຕິທຳທ້ອງຖິ່ນ ..... 10
ມາດຕາ 22 ການປະສານງານກັບພາກສ່ວນກ່ຽວຂ້ອງ ..... 11
ໝວດທີ 7 ບົດບັນຍັດສຸດທ້າຍ ..... 11
ມາດຕາ 23 ການຈັດຕັ້ງປະຕິບັດ ..... 11

ມາດຕາ 24 ຜົນສັກສິດ....................................................................................................................................11

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຍຸຕິທຳ ເລກທີ........../ກຍ

ນະຄອນຫຼວງວຽງຈັນ, ວັນທີ............... 2025

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ກະຊວງຍຸຕິທຳ
## ວ່າດ້ວຍການຄຸ້ມຄອງວິຊາຊີບຂອງທະນາຍຄວາມຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍທະນາຍຄວາມ,ສະບັບເລກທີ 23/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຍຸຕິທຳ, ສະບັບເລກທີ 601/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ສະບັບເລກທີ......./ ກຄສຍ, ລົງວັນທີ................................

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການປະກອບວິຊາຊີບຂອງທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນວິຊາຊີບກົດໝາຍ ຢູ່ ສປປລາວ ແນໃສ່ການຈັດຕັ້ງປະຕິບັດ ຢ່າງເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 2 ການຄຸ້ມຄອງ ທະນາຍຄວາມຕ່າງປະເທດ**

ການຄຸ້ມຄອງການ ທະນາຍຄວາມຕ່າງປະເທດ ແມ່ນ ການອະນຸຍາດ, ໂຈະ, ຖອນ, ຕິດຕາມ ແລະ ກວດກາ ການໃຫ້ບໍລິການທາງດ້ານກົດໝາຍຂອງທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ເຄື່ອນໄຫວວິຊາຊີບກົດໝາຍ ຢູ່ ສປປລາວ.

ການເຄື່ອນໄຫວວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ ໝາຍເຖິງ ການໃຫ້ບໍລິການໃຫ້ຄຳປຶກສາທາງດ້ານກົດໝາຍ ໃນຂົງເຂດກົດໝາຍໃດໜຶ່ງສະເພາະຕາມທີ່ທະນາຍຄວາມຕ່າງປະເທດນັ້ນໄດ້ຮັບອະນຸຍາດຈາກອົງການທີ່ມີສິດອຳນາດ ຂອງປະເທດທີ່ກ່ຽວຂ້ອງ ແລະ ໃນນາມວິສາຫະກິດກົດໝາຍ ຢູ່ ສປປລາວ.

**ມາດຕາ 3 ຫຼັກການ ໃນການຄຸ້ມຄອງ ທະນາຍຄວາມຕ່າງປະເທດ**

ການຄຸ້ມຄອງ ທະນາຍຄວາມຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງ, ແຜນຍຸດທະສາດ, ແລະ ແຜນພັດທະນາວຽກງານກົດໝາຍ ແລະຍຸຕິທຳ; ເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ;
2. ໃຫ້ອະນຸຍາດ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຢ່າງລວມສູນ, ເປັນເອກະພາບ ແລະ ໂປ່ງໃສ;
3. ໃຫ້ການບໍລິການ ຢ່າງມີຈັນຍາບັນ ຢ່າງເຄັ່ງຂັດ, ໂປ່ງໃສ ແລະ ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໃຊ້ບໍລິການ;
4. ຊຸກຍູ້ລະດົມໃຫ້ຜູ້ໃຊ້ບໍລິການ ເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ການໃຫ້ບໍລິການຂອງຕົນ;
5. ປະຕິບັດສິດ ແລະ ພັນທະອື່ນໆຕາມກົດໝາຍຂອງສປປລາວ ແລະ ຂອງສາກົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ທະນາຍຄວາມຕ່າງປະເທດ, ບຸກຄົນ, ນິຕິບຸກຄົນ ແລະ ວິສາຫະກິດກົດໝາຍພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ໝວດທີ 2
## ການຂໍອະນຸຍາດ ການເຄື່ອນໄຫວວິຊາຊີບກົດໝາຍ

**ມາດຕາ 5 ເງື່ອນໄຂໃນການຂໍອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ**

ທະນາຍຄວາມຕ່າງປະເທດ ທີ່ວິສາຫະກິດກົດໝາຍ ທີ່ຕ້ອງການຂໍອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ຢູ່ ສປປລາວ ຕ້ອງມີເງື່ອນໄຂດັ່ງນີ້:

- ເປັນທະນາຍຄວາມ ທີ່ໄດ້ຮັບການອະນຸຍາດວິຊາຊີບກົດໝາຍ ຈາກອົງການທີ່ມີສິດອຳນາດ ຈາກປະເທດໃດໜຶ່ງ ແລະ ອາຍຸການຂອງໃບອະນຸຍາດ ຍັງເຫຼືອ ຢ່າງໜ້ອຍ 2 ປີ ຂຶ້ນໄປ, ໃນວັນທີ່ຍື່ນຄຳຮ້ອງ;
- ເປັນທະນາຍຄວາມ ທີ່ມີປະສົບການໃນການເຄື່ອນໄຫວວິຊາຊີບກົດໝາຍຕາມການອະນຸຍາດນັ້ນ 3 ປີ ຂຶ້ນໄປ ຢູ່ປະເທດຕົນເອງ ຫຼື ປະເທດໃດໜຶ່ງ;
- ໄດ້ຮັບການຢັ້ງຢືນຈາກອົງການກ່ຽວຂ້ອງທີ່ມີສິດອຳນາດ ຂອງປະເທດ ທີ່ເຄີຍໄດ້ອາໄສຢູ່ກ່ອນ 3 ປີຂຶ້ນໄປ ວ່າບໍ່ເຄີຍຖືກສານຕັດສິນລົງໂທດທາງແພ່ງ ຫຼື ອາຍາ;
- ມີແຜນການເຄື່ອນໄຫວວິຊາຊີບກົດໝາຍ ຢູ່ ສປປລາວ ຫຼື ແຜນດຳເນີນທຸລະກິດຂອງວິສາຫະກິດກົດໝາຍຢູ່ ສປປ ລາວ ທີ່ຕົນຈະສັງກັດ;
- ມີສັນຍາບໍລິການລະຫວ່າງວິສາຫະກິດກົດໝາຍທີ່ຢູ່ ສປປລາວ ແລະ ທະນາຍຄວາມຕ່າງປະເທດ;
- ມີຄວາມເຂົ້າໃຈກ່ຽວກັບ ລະບົບການເມືອງ, ວັດທະນະທຳ-ສັງຄົມ ຂອງສປປລາວ;
- ມີສຸຂະພາບແຂງແຮງດີ.

**ມາດຕາ 6 ເນື້ອໃນຂອງຄໍາຮ້ອງ ແລະ ເອກະສານປະກອບ**

ຄໍາຮ້ອງ ຂໍອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ ປະກອບມີເນື້ອໃນດັ່ງນີ້:

- ພາກ I: ກ່ຽວກັບວິສາຫະກິດກົດໝາຍ

1. ຊື່ວິສາຫະກິດກົດໝາຍ, ເລກໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ ແລະ ຈໍານວນຜູ້ຖືກຮຸ້ນ ແລະ ທະນາຍຄວາມປະຈໍາ;
2. ເຫດຜົນໃນການສະເໜີຂໍອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ, ພ້ອມສໍາເນົາສັນຍາແຮງງານກັບທະນາຍຄວາມຕ່າງປະເທດ;
3. ການຮັບປະກັນ.

- ພາກ II: ກ່ຽວກັບທະນາຍຄວາມຕ່າງປະເທດ

1. ຊີວະປະຫວັດຍໍ້ ຂອງທະນາຍຄວາມຕ່າງປະເທດ: ຊື່ ແລະ ນາມສະກຸນ; ວັນ, ເດືອນ, ປີ ແລະ ສະຖານທີ່ເກີດ; ສັນຊາດ, ເລກໜັງສືເດີນທາງ ແລະ ວັນໝົດອາຍຸຂອງໜັງສືເດີນທາງ; ສະຖານທີ່ຢູ່ອາໃສສຸດທ້າຍ ກ່ອນຈະເຂົ້າ ສປປລາວ;
2. ກ່ຽວກັບວິຊາຊີບກົດໝາຍ: ເລກໃບອະນຸຍາດວິຊາຊີບກົດໝາຍ, ຂົງເຂດອະນຸຍາດ, ອາຍຸຂອງການອະນຸຍາດ, ໃບຢັ້ງຢືນການເສຍເງິນສະມາຊິກທະນາຍຄວາມຂອງປະເທດທີ່ອະນຸຍາດ, ໃບຢັ້ງຢືນການເສຍອາກອນລາຍໄດ້ ແລະ ອາກອນອື່ນໆ ຢູ່ ປະເທດທີ່ເຄື່ອນໄຫວເປັນທະນາຍຄວາມ;
3. ແຜນດໍາເນີນທຸລະກິດ ຕາມແບບພິມສະເພາະ;
4. ໃບປະຕິຍານ ຂອງທະນາຍຄວາມຕ່າງປະເທດ ຕາມແບບພິມສະເພາະ;

ບັນດາເນື້ອໃນດັ່ງກ່າວຕ້ອງມີສໍາເນົາຢັ້ງຢືນທີ່ຖືກຕ້ອງ ເພື່ອປະກອບການພິຈາລະນາ ມາພ້ອມກັບຄໍາຮ້ອງ.

**ມາດຕາ 7 ຂັ້ນຕອນການພິຈາລະນາຄໍາຮ້ອງຂໍອະນຸຍາດເຄື່ອນການໄຫວວິຊາຊີບກົດໝາຍ**

ທະນາຍຄວາມຕ່າງປະເທດ ທີ່ມີຈຸດປະສົງ ສະເໜີຂໍອະນຸຍາດເຄື່ອນໄຫວວິຊາຊີບຂອງທະນາຍຄວາມ ຢູ່ ສປປລາວ ໂດຍບໍ່ໄດ້ຜ່ານສັນຍາບໍລິການກັບວິສາຫະກິດກົດໝາຍໃດໜຶ່ງຢູ່ສປປລາວ ຈະບໍ່ໄດ້ຮັບການພິຈາລະນາ.

ວິສາຫະກິດກົດໝາຍ ຕ້ອງຂໍອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍ ໃຫ້ທະນາຍຄວາມຕ່າງປະເທດ ກ່ອນທີ່ທະນາຍຄວາມຕ່າງປະເທດຜູ້ນັ້ນ ຈະເຂົ້າມາສປປລາວ.

ການຂໍອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ ໃຫ້ດໍາເນີນຕາມຂັ້ນຕອນດັ່ງນີ້:

1. ວິສາຫະກິດກົດໝາຍ ຍື່ນຄໍາຮ້ອງຕາມແບບພິມສະເພາະ ແລະ ເອກະສານປະກອບຄໍາຮ້ອງ;

2. ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທໍາ ຕ້ອງກວດກາຄວາມຄົບຖ້ວນ ຂອງ ຄໍາຮ້ອງ ແລະ ເອກະສານປະກອບ, ຖ້າຫາກພົບເຫັນວ່າ ມີເອກະສານປະກອບບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ໃຫ້ແຈ້ງ ວິສາຫະກິດກົດໝາຍ ທັນທີ;

3. ຖ້າຫາກເຫັນວ່າຄໍາຮ້ອງ ແລະ ເອກະສານປະກອບຄົບຖ້ວນແລ້ວ, ໃຫ້ ກວດກາ ຄວາມຖືກຕ້ອງ ແລະ ຄວາມເປັນຈິງຂອງເອກະສານປະກອບ ພາຍໃນກໍານົດເວລາ 3 ວັນທາງລັດຖະການ ນັບແຕ່ວັນທີ່ຮັບຄໍາຮ້ອງເປັນຕົ້ນໄປ. ໃນກໍລະນີທີ່ມີຄວາມສົງໄສ, ຄວາມບົກຜ່ອງ ຫຼື ຂໍ້ມູນອື່ນໆ ຂອງເອກະສານ

ປະກອບ ບໍ່ຈະແຈ້ງ ໃຫ້ແຈ້ງຄືນໃຫ້ ວິສາຫະກິດກົດໝາຍ ພ້ອມດ້ວຍກຳນົດເວລາ, ຖ້າຫາກວ່າ ວິສາຫະກິດກົດໝາຍບໍ່ສາມາດສະໜອງຂໍ້ມູນໃຫ້ຕື່ມໄດ້ ພາຍຫຼັງທີ່ໝົດກຳນົດເວລາ ຫຼື ພາຍຫຼັງທີ່ໄດ້ຕໍ່ກຳນົດເວລາແລ້ວ, ໃຫ້ສົ່ງຄືນຄຳຮ້ອງ ແລະ ເອກະສານປະກອບ ພ້ອມທັງເຫດຜົນ ໃຫ້ວິສາຫະກິດກົດໝາຍທີ່ຍື່ນຄຳຮ້ອງພາຍໃນກຳນົດເວລາ 3 ວັນທາງລັດຖະການ;

4. ເມື່ອຄຳຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງແລ້ວ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງສະເໜີ ໃຫ້ ລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບ ພາຍໃນກຳນົດເວລາ 3 ວັນທາງລັດຖະການ;

5. ພາຍຫຼັງທີ່ໄດ້ອອກຂໍ້ຕົກລົງອະນຸຍາດໃຫ້ເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດແລ້ວ, ກົມຄຸ້ມຄອງ ແລະ ສົ່ງເສີມລະບົບຍຸຕິທຳ ຕ້ອງແຈ້ງໃຫ້ ວິສາຫະກິດກົດໝາຍ ພາຍໃນກຳນົດ 3 ວັນທາງລັດຖະການ ພ້ອມທັງແຈ້ງຂໍ້ມູນກ່ຽວກັບການຈົດທະບຽນເປັນສະມາຊິກຂອງສະພາທະນາຍຄວາມ ໃຫ້ວິສາຫະກິດ ແລະ ສະພາທະນາຍຄວາມຮັບຊາບ. ໃນກໍລະນີທີ່ ບໍ່ສາມາດອອກໃບອະນຸຍາດເຄື່ອນໄຫວວິຊາຊີບທາງດ້ານກົດໝາຍໄດ້, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມທັງເຫດຜົນໃຫ້ວິສາຫະກິດກົດໝາຍ ທີ່ຍື່ນຄຳຮ້ອງ ຮັບຊາບພາຍໃນກຳນົດ 3 ວັນທາງລັດຖະການ.

ວິສາຫະກິດກົດໝາຍທີ່ຍື່ນຄຳຮ້ອງ ຕ້ອງໄດ້ເສຍເງິນຄ່າບໍລິການ 150,000 ກີບ.

### ມາດຕາ 8 ເນື້ອໃນໃບອະນຸຍາດ ການເຄື່ອນໄຫວວິຊາຊີບກົດໝາຍ

ໃບອະນຸຍາດ ການເຄື່ອນໄຫວວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ ຢູ່ ສປປລາວ ປະກອບດ້ວຍເນື້ອໃນດັ່ງນີ້:

- ຊື່ ແລະ ນາມສະກຸນ ຂອງທະນາຍຄວາມຕ່າງປະເທດ ເປັນພາສາລາວ ແລະ ພາສາຕ່າງປະເທດ;
- ເລກໃບທະບຽນອະນຸຍາດ;
- ບ່ອນສັງກັດ (ວິສາຫະກິດ) ແລະ ທີ່ຕັ້ງສຳນັກງານຂອງວິສາຫະກິດ;
- ປະເພດ ຂົງເຂດການໃຫ້ບໍລິການກົດໝາຍ.
- ອາຍຸຂອງການອະນຸຍາດ.

### ມາດຕາ 9 ອາຍຸຂອງການອະນຸຍາດ, ການເກັບຮັກສາ ແລະ ການເຜີຍແຜ່ຂໍ້ມູນ

ການອະນຸຍາດ ການເຄື່ອນໄຫວວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ ມີອາຍຸ ຕາມສັນຍາບໍລິການລະຫວ່າງ ວິສາຫະກິດກົດໝາຍ ແລະ ທະນາຍຄວາມຕ່າງປະເທດ/1 ປີ ໂດຍບໍ່ຂຶ້ນກັບວ່າທະນາຍຄວາມຕ່າງປະເທດນັ້ນ ເປັນຮຸ້ນສ່ວນ ຫຼື ຜູ້ຖືຮຸ້ນໃນວິສາຫະກິດກົດໝາຍດັ່ງກ່າວຫຼືບໍ່. ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ສາມາດຕໍ່ ໄດ້ຕາມຂໍ້ຕົກລົງສະບັບນີ້.

ວິສາຫະກິດກົດໝາຍ ທີ່ໄດ້ຮັບອະນຸຍາດ ຕ້ອງເຜີຍແຜ່ ໃບອະນຸຍາດວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ຢູ່ສຳນັກງານຂອງຕົນ ໄປພ້ອມກັບໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດກົດໝາຍ.

ວິສາຫະກິດກົດໝາຍ ສາມາດຂໍໃຫ້ອອກໃບອະນຸຍາດໃໝ່ໄດ້ໃນກໍລະນີທີ່ໃບອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ຫາກເສຍຫາຍ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດກວດກາຄວາມຖືກຕ້ອງ ຫຼື ຂໍສຳເນົາໃບອະນຸຍາດວິຊາຊີບກົດໝາຍຂອງທະນາຍຄວາມຕ່າງປະເທດ ໄດ້ໂດຍບໍ່ເສຍຄ່າ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ລະບຽບການສະເພາະ.

## ໝວດທີ 3
## ການການໂຈະ ແລະ ການຖອນ
## ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ

**ມາດຕາ 10 ການສະເໜີ ໂຈະ ການເຄື່ອນໄຫວວິຊາຊີບກົດໝາຍ**

ບຸກຄົນ, ການຈັດຕັ້ງ ຫຼື ນິຕິບຸກຄົນ ສາມາດສະເໜີ ໃຫ້ກະຊວງຍຸຕິທຳ ໂຈະການເຄື່ອນໄຫວ ວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ເປັນລາຍລັກອັກສອນພ້ອມດ້ວຍເຫດຜົນໃດໜຶ່ງ ດັ່ງນີ້:

1. ທະນາຍຄວາມຕ່າງປະເທດດັ່ງກ່າວ ອາດມີການປະພຶດ ຫຼື ການປະຕິບັດ ທີ່ຂັດຕໍ່ຈັນຍາບັນຂອງທະນາຍຄວາມ ເຊັ່ນ ບໍລິສຸດໃຈ ຕໍ່ລູກຄວາມ ດ້ວຍການໃຫ້ຄຳປຶກສາ ທັງໃຫ້ລູກຄວາມ ແລະ ຝ່າຍທີ່ກົງກັນຂ້າມກັບລູກຄວາມ; ບໍ່ປະຕິບັດຕາມສັນຍາບໍລິການ.

2. ທະນາຍຄວາມຕ່າງປະເທດດັ່ງກ່າວ ອາດມີການປະພຶດ ຫຼື ມີຄຳເຫັນທີ່ມີລັກສະນະແບ່ງແຍກຄວາມສາມັກຄີ, ຈຳແນກເພດ ຫຼື ບໍ່ເຄົາລົບຮີດຄອງປະເພນີອັນດີງາມຂອງເຜົ່າ ຫຼື ມີຄຳເຫັນຕໍ່ທາງດ້ານການເມືອງ ທີ່ບໍ່ກ່ຽວຂ້ອງກັບການໃຫ້ຄຳເຫັນ ຄຳປຶກສາທາງດ້ານກົດໝາຍ ຕາມວິຊາສະເພາະຂອງຕົນ.

3. ມີພຶດຕິກຳອື່ນທີ່ເຫັນວ່າ ເປັນການລະເມີດກົດໝາຍ.

**ມາດຕາ 11 ການພິຈາລະນາໂຈະ ການເຄື່ອນໄຫວວິຊາຊີບກົດໝາຍ**

ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງກ່ຽວກັບການສະເໜີໂຈະການເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດແລ້ວ, ໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມລະບົບຍຸຕິທຳ ປະຕິບັດດັ່ງນີ້, ຂຶ້ນກັບກໍລະນີ:

1. ໃນກໍລະນີ ທີ່ກ່ຽວຂ້ອງກັບ ຈັນຍາບັນຂອງທະນາຍຄວາມ, ສົ່ງຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ໃຫ້ຄະນະກວດກາ ຂອງສະພາທະນາຍຄວາມ ພິຈາລະນາ ຊຶ່ງຄະນະກວດກາສະພາທະນາຍຄວາມຕ້ອງລົງຄຳເຫັນ ພາຍໃນກຳນົດ 3 ວັນທາງລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີຈາກກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ແລະ ສົ່ງຄຳເຫັນນັ້ນເປັນລາຍລັກອັກສອນໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳຊາບ; ໃນກໍລະນີນີ້, ພາຍຫຼັງທີ່ໄດ້ການລົງຄຳເຫັນ ຂອງຄະນະກວດກາ ສະພາທະນາຍຄວາມແລ້ວ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງມີຄຳເຫັນ ໂຈະ ຫຼື ບໍ່ໂຈະການເຄື່ອນໄຫວວິຊາຊີບຂອງທະນາຍຄວາມຕ່າງປະເທດ ທີ່ຖືກສະເໜີນັ້ນ;

2. ໃນກໍລະນີທີ່ເຫັນວ່າ ມີເຫດຜົນພຽງພໍໃນການໂຈະການເຄື່ອນໄຫວວິຊາຊີບຂອງທະນາຍຄວາມຕ່າງປະເທດ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງສະເໜີໃຫ້ ລັດຖະມົນຕີກະຊວງຍຸຕິທຳໂຈະການເຄື່ອນໄຫວວິຊາຊີບ ພາຍໃນກຳນົດ 3 ວັນທາງລັດຖະການ.

3. ໃນກໍລະນີທີ່ເຫັນວ່າ ເປັນການລະເມີດສັນຍາ ທີ່ກ່ຽວຂ້ອງ ເຊັ່ນ ການບໍ່ປະຕິບັດສັນຍາ ໃຫ້ແຈ້ງພ້ອມດ້ວຍກຳນົດເວລາ ໃຫ້ວິສາຫະກິດກົດໝາຍທີ່ທະນາຍຄວາມຕ່າງປະເທດຜູ້ນັ້ນສັງກັດຢູ່ແກ້ໄຂ.

4. ໃນກໍລະນີ ທີ່ເປັນການລະເມີດກົດໝາຍອື່ນ ໃຫ້ແນະນຳຜູ້ສະເໜີຂໍໂຈະການເຄື່ອນໄຫວວິຊາຊີບທະນາຍຄວາມ ດັ່ງກ່າວ ດຳເນີນຕາມຂັ້ນຕອນຕາມກົດໝາຍ, ແລ້ວແຕ່ກໍລະນີໜັກ ຫຼື ເບົາ;

5. ມີການສະເໜີຈາກບຸກຄົນ ຫຼື ພາກສ່ວນອື່ນຂອງຕ່າງປະເທດ ກ່ຽວກັບການລະເມີດກົດໝາຍຂອງທະນາຍຄວາມຕ່າງປະເທດດັ່ງກ່າວ ພ້ອມທັງເອກະສານປະກອບການສະເໜີ.

**ມາດຕາ 12 ການຖອນການອະນຸຍາດ ແລະ ລຶບຊື່ທະນາຍຄວາມຕ່າງປະເທດ**

ເມື່ອເຫັນວ່າທະນາຍຄວາມຕ່າງປະເທດ ຫາກຖືກໂຈະການເຄື່ອນໄຫວວິຊາຊີບ ແລະ ບໍ່ໄດ້ແກ້ໄຂບັນຫາຕາມກຳນົດເວລາທີ່ແຈ້ງແລ້ວ ຫຼື ໃນກໍລະນີທີ່ມີຄໍາຕັດສິນຂອງສານເປັນຂັ້ນສຸດທ້າຍ ກ່ຽວກັບການປະພຶດຂອງຜູ້ກ່ຽວ ກົມຄຸ້ມຄອງ ແລະ ສົ່ງເສີມລະບົບຍຸຕິທຳ ຕ້ອງຄົ້ນຄວ້າແລ້ວສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາຖອນການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມ ດັ່ງກ່າວ.

ພາຍຫຼັງທີ່ໄດ້ຖືກຖອນການອະນຸຍາດແລ້ວ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງແຈ້ງໃຫ້ວິສາຫະກິດກົດໝາຍ ແລະ ທະນາຍຄວາມຕ່າງປະເທດນັ້ນຊາບເປັນລາຍລັກອັກສອນ ພາຍໃນກຳນົດ 3 ວັນທາງລັດຖະການ ແລະ ຕ້ອງລຶບຊື່ທະນາຍຄວາມຕ່າງປະເທດດັ່ງກ່າວອອກຈາກລະບົບຖານຂໍ້ມູນທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ພ້ອມທັງແຈ້ງ ສະພາທະນາຍຄວາມ ເປັນລາຍລັກອັກສອນ ພາຍໃນກຳນົດ 3 ວັນ ທາງລັດຖະການ.

ທະນາຍຄວາມຕ່າງປະເທດ ທີ່ຖືກຖອນການອະນຸຍາດ ແລະ ຖືກລຶບຊື່ບໍ່ສາມາດ ຂໍອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍ ຢູ່ ສປປລາວ ໄດ້ອີກ.

## ໝວດທີ 4
## ການຕໍ່ການອະນຸຍາດ

**ມາດຕາ 13 ການສະເໜີຕໍ່ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ**

ວິສາຫະກິດກົດໝາຍ ທີ່ມີຈຸດປະສົງ ການອະນຸຍາດ ການເຄື່ອນໄຫວ ວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ຕ້ອງໄດ້ ສະເໜີຂໍຕໍ່ການອະນຸຍາດ ລ່ວງໜ້າ 1 (ໜຶ່ງ) ເດືອນ ກ່ອນ ອາຍຸຕາມໃບອະນຸຍາດ ຈະສິ້ນສຸດ ຕາມຂັ້ນຕອນທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 14 ຄຳຮ້ອງ ແລະ ເອກະສານປະກອບ ໃນການຂໍຕໍ່ການອະນຸຍາດ**

ວິສາຫະກິດກົດໝາຍ ທີ່ສະເໜີ ຂໍຕໍ່ການອະນຸຍາດ ການເຄື່ອນໄຫວ ວິຊາຊີບຂອງທະນາຍຄວາມຕ່າງປະເທດ ຢູ່ ສປປລາວ ໃຫ້ ລຸ່ມນີ້:

1. ຄຳຮ້ອງຂໍຕໍ່ການອະນຸຍາດ ຕາມແບບພິມສະເພາະ;
2. ບົດລາຍງານສະຫຼຸບກ່ຽວກັບເຄື່ອນໄຫວຂອງທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດຕາມແຜນດຳເນີນທຸລະກິດ ຫຼື ແຜນການເຄື່ອນໄຫວທີ່ສະເໜີຜ່ານມາ ຕາມແບບພິມສະເພາະ;
3. ສຳເນົາຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ໃນໄລຍະຜ່ານມາ ຈາກພາກສ່ວນກ່ຽວຂ້ອງເຊັ່ນ ໃບຢັ້ງຢືນການມອບອາກອນເງິນເດືອນຂອງທະນາຍຄວາມຕ່າງປະເທດ, ການເສຍເງິນບຳລຸງສະມາຊິກສະພາທະນາຍຄວາມ ແລະ ອື່ນໆ;
4. ສຳເນົາສັນຍາບໍລິການ ສະບັບໃໝ່ ລະຫວ່າງວິສາຫະກິດກົດໝາຍ ແລະ ທະນາຍຄວາມ;
5. ສຳເນົາໜັງສືເດີນທາງ, ໃບອະນຸຍາດເຮັດວຽກ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 15 ເງື່ອນໄຂໃນການພິຈາລະນາຕໍ່ການອະນຸຍາດ**

ການພິຈາລະນາ ຕໍ່ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ຢູ່ ສປປລາວ ຕ້ອງປະຕິບັດຕາມເງື່ອນໄຂ ລຸ່ມນີ້:

1. ຄຳຮ້ອງ ແລະ ເອກະສານປະກອບ ຕາມມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ຄົບຖ້ວນ, ຖືກ ຕ້ອງ ແລະ ຕົວຈິງ;

2. ການເຄື່ອນໄຫວຂອງທະນາຍຄວາມຕ່າງປະເທດ ຢູ່ ສປປລາວ ໃນໄລຍະຜ່ານມາ ຖືກຕ້ອງຕາມການລາຍງານ ແລະ ຕາມກົດໝາຍ ທີ່ກ່ຽວຂ້ອງ;

3. ທະນາຍຄວາມຕ່າງປະເທດ ບໍ່ໄດ້ລະເມີດຈັນຍາບັນ ຫຼື ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 16 ຂັ້ນຕອນການພິຈາລະນາຕໍ່ການອະນຸຍາດ**

ການພິຈາລະນາ ຕໍ່ການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ຢູ່ ສປປລາວ ໃຫ້ປະຕິບັດຄ້າຍຄືກັນກັບ ຕາມຂັ້ນຕອນຕ່າງໆ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ສິດ ແລະ ພັນທະ ແລະ ການລາຍງານ

**ມາດຕາ 17 ສິດ ແລະ ພັນທະທະນາຍຄວາມຕ່າງປະເທດ**

ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ວິຊາຊີບກົດໝາຍ, ນອກຈາກທີ່ກຳນົດໄດ້ໃນມາດຕາ 18 ແລະ 36 ຂອງກົດໝາຍວ່າດ້ວຍທະນາຍຄວາມ, ຍັງມີສິດ ແລະພັນທະຄື:

1. ເຄົາລົບ, ນັບຖື ແລະ ປະຕິບັດກົດໝາຍຂອງສປປລາວ ຢ່າງເຄັ່ງຄັດ;
2. ໃຫ້ຄຳປຶກສາທາງດ້ານກົດໝາຍທີ່ກ່ຽວຂ້ອງກັບຂົງເຂດທີ່ຕົນໄດ້ຮັບການອະນຸຍາດ ເທົ່ານັ້ນ;
3. ປະຕິບັດພັນທະທາງດ້ານການເງິນ ຕາມກົດໝາຍ ເຊັ່ນ ກົດໝາຍວ່າດ້ວຍອາກອນລາຍໄດ້;
4. ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ ກ່ຽວຂ້ອງກັບຂົງເຂດກົດໝາຍ ທີ່ຕົນໄດ້ຮັບອະນຸຍາດ;
5. ເຄົາລົບຮີດຄອງປະເພນີ ອັນດີງາມຂອງປະຊາຊົນລາວບັນດາເຜົ່າ ເປັນຢ່າງດີ;
6. ບໍ່ຈຳແນກເພດ, ເຜົ່າ ແລະ ຄວາມສາມັກຄີປອງດອງລະຫວ່າງເຜົ່າ; ແລະ ບໍ່ເຂົ້າຮ່ວມການເຄື່ອນໄຫວ ຫຼື ກິດຈະກຳໃດໜຶ່ງ ທີ່ສ້າງຜົນກະທົບຕໍ່ລະບົບການເມືອງຂອງສປປລາວ.
7. ມີສິດ ແລະ ພັນທະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 18 ສິດ ແລະ ພັນທະຂອງວິສາຫະກິດກົດໝາຍ**

ວິສາຫະກິດກົດໝາຍ ທີ່ຮັບເອົາ ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ວິຊາຊີບກົດໝາຍ ມີສິດ ແລະພັນທະຕົ້ນຕໍ ດັ່ງນີ້:

1. ເຄົາລົບ, ນັບຖື ແລະ ປະຕິບັດກົດໝາຍຂອງສປປລາວ ຢ່າງເຄັ່ງຄັດ;
2. ຄຸ້ມຄອງ ແລະ ຊຸກຍູ້ໃຫ້ ທະນາຍຄວາມຕ່າງປະເທດ ໃຫ້ເຄົາລົບ ແລະ ປະຕິບັດກົດໝາຍຂອງສປປລາວ, ເຄົາລົບ ແລະ ນັບຖື ຮີດຄອງປະເພນີອັນດີງາມຂອງຊາດລາວ ແລະ ບໍ່ຈຳແນກ ແລະ ແບ່ງແຍກຄວາມສາມັກຄີ ຢ່າງເຄັ່ງຄັດ;
3. ນຳໃຊ້ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງທະນາຍຄວາມຕ່າງປະເທດ ຕາມກົດໝາຍ ແລະ ສັນຍາແຮງງານ/ສັນຍາບໍລິການ;
4. ສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືໃນການຄຸ້ມຄອງທະນາຍຄວາມຕ່າງປະເທດ ຕາມການສະເໜີຂອງກະຊວງຍຸຕິທຳ ຫຼື ພາກສ່ວນກ່ຽວຂ້ອງ;
5. ປະຕິບັດພັນທະຕໍ່ລັດຢ່າງເຄັ່ງຄັດ ແລະ ປະກອບສ່ວນຊ່ວຍເຫຼືອສັງຄົມ ຕາມຄວາມສະໝັກໃຈ ແລະ ເງື່ອນໄຂຂອງຕົນ
6. ມີສິດ ແລະ ພັນທະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 19 ການລາຍງານ**

ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວວິຊາຊີບກົດໝາຍ ຕ້ອງໄດ້ລາຍງານການເຄື່ອນໄຫວຂອງຕົນປະຈຳປີ ບົນພື້ນຖານແຜນທຸລະກິດ/ແຜນການເຄື່ອນໄຫວຂອງຕົນ ແລະ ການເຄື່ອນໄຫວ ຕົວຈິງໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ບໍ່ໃຫ້ກາຍວັນທີ 10 ມັງກອນ ຂອງແຕ່ລະປີ. ການລາຍງານປະຈຳປີ ໃຫ້ນຳໃຊ້ແບບພິມສະເພາະ.

ວິສາຫະກິດກົດໝາຍ ທີ່ຮັບເອົາ ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ວິຊາຊີບກົດໝາຍ ຕ້ອງໄດ້ຮັບຮອງເອົາບົດລາຍງານປະຈຳປີດັ່ງກ່າວ.

ໃນກໍລະນີ ທີ່ມີການຍົກເລີກສັນຍາບໍລິການ/ສັນຍາ ແຮງງານ ດ້ວຍຄວາມສະໝັກໃຈ ກ່ອນກຳນົດເວລາທີ່ຕົກລົງກັນໄວ້ໃນສັນຍາ ໃຫ້ ທະນາຍຄວາມຕ່າງປະເທດ ແລະ/ຫຼື ວິສາຫະກິດກົດໝາຍ ແຈ້ງໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳຊາບ ພາຍໃນກຳນົດ 3 ວັນ ລັດຖະການ.

ການບໍ່ລາຍງານປະຈຳປີ ຫຼື ແຈ້ງໃຫ້ຊາບກ່ຽວກັບການຍົກເລີກສັນຍາ ຈະມີຜົນຕໍ່ການຕໍ່ອາຍຸການອະນຸຍາດການເຄື່ອນໄຫວວິຊາຊີບກົດໝາຍ ຂອງທະນາຍຄວາມຕ່າງປະເທດ ແລະ ການອະນຸຍາດດຳເນີນທຸລະກິດກົດໝາຍ ຂອງວິສາຫະກິດກົດໝາຍ.

## ໝວດທີ 6
## ການປະສານງານ

**ມາດຕາ 20 ການປະສານງານກັບສະພາທະນາຍຄວາມ**

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການຕິດຕາມການເຄື່ອນໄຫວວິຊາຊີບ ຂອງທະນາຍຄວາມຕ່າງປະເທດ ຢູ່ ສປປລາວ ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບຕົວຈິງ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງປະສານກັບສະພາທະນາຍຄວາມ ຕາມເນື້ອໃນດັ່ງນີ້:

- ຕິດຕາມ ສະພາບການເຄື່ອນໄຫວ ຂອງ ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ໃນກໍລະນີທີ່ເຫັນວ່າທະນາຍຄວາມຕ່າງປະເທດ ທີ່ສັງກັດວິສາຫະກິດກົດໝາຍ ອາດລະເມີດກົດໝາຍ, ຈັນຍາບັນ ຫຼື ນິຕິກຳໃດໜຶ່ງ;
- ປະຕິບັດການຕິດຕາມ ແລະ ກວດກາ ຕາມແຈ້ງການຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ກ່ຽວກັບການເຄື່ອນໄຫວ ຂອງທະນາຍຄວາມຕ່າງປະເທດທີ່ໄດ້ຮັບອະນຸຍາດ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ການແຈ້ງການຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ.

**ມາດຕາ 21 ການປະສານງານກັບຂະແໜງຍຸຕິທຳທ້ອງຖິ່ນ**

ອີງຕາມມາດຕາ 76, 77 ແລະ 78 ຂອງກົດໝາຍວ່າດ້ວຍທະນາຍຄວາມ, ເພື່ອເຮັດໃຫ້ການກວດກາ ພາຍໃນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ການເຄື່ອນໄຫວວິຊາຊີບກົດໝາຍ ຂອງ ວິສາຫະກິດກົດໝາຍ ແລະ ທະນາຍຄວາມຕ່າງປະເທດ ທີ່ສັງກັດວິສາຫະກິດກົດໝາຍ ທີ່ຕັ້ງຢູ່ ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ເມືອງ ຫຼື ນະຄອນ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງປະສານກັບພະແນກຍຸຕິທຳແຂວງ, ນະຄອນຫຼວງ, ເມືອງ ຫຼື ນະຄອນ ທີ່ກ່ຽວຂ້ອງ ກ່ຽວກັບ:

- ການກວດກາຕົວຈິງ ຕາມປະເດັນທີ່ມີການ ຄຳສະເໜີ ເປັນລາຍລັກອັກສອນ ຈາກຜູ້ໃຊ້ບໍລິການຂອງວິສາຫະກິດກົດໝາຍ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ພາກສ່ວນກ່ຽວຂ້ອງ ກ່ຽວກັບ ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ທີ່ຢູ່ ແຂວງ, ນະຄອນຫຼວງ, ເມືອງ ຫຼື ນະຄອນ.
- ກວດກາບັນດາຂໍ້ມູນຕ່າງໆຕາມຄວາມເປັນຈິງ ໃນກໍລະນີ ທີ່ມີການສະເໜີຂໍຕໍ່ການອະນຸຍາດເຄື່ອນໄຫວ ວິຊາຊີບກົດໝາຍ;

- ກວດກາຄວາມເປັນຈິງ ແລະ ປະສານງານກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ ໃນກໍລະນີ ທີ່ມີການສະເໜີວ່າ ທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ຫາກມີການປະພຶດ ຫຼື ໄດ້ມີການລະເມີດກົດໝາຍ ຫຼື ນິຕິກຳກ່ຽວຂ້ອງ.

**ມາດຕາ 22 ການປະສານງານກັບພາກສ່ວນກ່ຽວຂ້ອງ**

ອີງຕາມມາດຕາ 75 ຂອງກົດໝາຍວ່າດ້ວຍທະນາຍຄວາມ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ມີສິດ ແລະ ໜ້າທີ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ການເຄື່ອນໄຫວວິຊາຊີບຂອງທະນາຍຄວາມຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ເຊັ່ນ: ຂະແໜງການສວຍສາອາກອນ, ທະບຽນວິສາຫະກິດ, ປ້ອງກັນຄວາມສະຫງົບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບສະພາທະນາຍຄວາມ ແລະ ພາກສ່ວນກ່ຽວຂ້ອງ.

ຫ້ອງການ, ບັນດາກົມ, ກອງ, ແລະ ຫ້ອງ; ສະຖາບັນຍຸຕິທຳແຫ່ງຊາດ ແລະ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ລົງລາຍເຊັນເປັນຕົ້ນໄປ.

ການອະນຸຍາດໃຫ້ທະນາຍຄວາມຕ່າງປະເທດເຄື່ອນໄຫວວິຊາຊີບກົດໝາຍ ຢູ່ ສປປລາວ ກ່ອນໜ້າຂໍ້ຕົກລົງສະບັບນີ້ ຍັງມີຜົນສັກສິດ ຈົນກວ່າຈະໝົດອາຍຸການອະນຸຍາດ.

**ລັດຖະມົນຕີ,**